# ພະນະທ່ານ ດຣ. ທອງລຸນ ສີສຸລິດ ເຂົ້າຮ່ວມກອງປະຊຸມ
# ຂອບການຮ່ວມມືອາຊີຕາເວັນອອກກາງຄັ້ງທີ II ທີ່ປະເທດ ເອຢິບ

ກອງປະຊຸມຂອບການຮ່ວມມື ອາຊີ-ຕາເວັນອອກກາງ ຄັ້ງທີ II ໄດ້ຈັດຂຶ້ນຢ່າງເປັນທາງການ (Asia Middle East Dialogue II) ທີ່ເມືອງຊາມເອລເຊັກ, ປະເທດເອຢິບ ລະຫວ່າງວັນທີ 5-6 ເມສາ 2008, ເຊິ່ງມີຄະນະຜູ້ແທນຈາກ 46 ປະເທດ ເຂົ້າຮ່ວມ.

ຄະນະຜູ້ແທນແຫ່ງ ສປປ ລາວ ນໍາໂດຍພະນະທ່ານ ດຣ. ທອງລຸນ ສີສຸລິດ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ ໄດ້ເຂົ້າຮ່ວມກອງປະຊຸມ ດັ່ງກ່າວ ໂດຍມີຈຸດປະສົງເລັ່ງໃສ່ເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືແບບຕ່າງຝ່າຍຕ່າງມີຜົນປະໂຫຍດລະຫວ່າງ 2 ພາກພື້ນອາຊີ ແລະ ຕາເວັນອອກກາງ ໃນ 3 ຂົງເຂດໃຫຍ່ຄື: ການເມືອງ ແລະ ຄວາມຫມັ້ນຄົງ, ເສດຖະກິດການຄ້າ, ການລົງທຶນ, ການທ່ອງທ່ຽວ ແລະ ຂົງເຂດວັດທະນະທໍາ-ສັງຄົມ.

ໃນວາລະກອງປະຊຸມ ວ່າດ້ວຍການຮ່ວມມືທາງດ້ານເສດຖະກິດ, ພະນະທ່ານ ດຣ. ທອງລຸນ ສີສຸລິດ, ໄດ້ເປັນກຽດຂຶ້ນມີຄໍາເຫັນ ໂດຍໄດ້ຊີ້ໃຫ້ເຫັນເຖິງຄວາມຫມາຍຄວາມສໍາຄັນຂອງຂອບການຮ່ວມມືດັ່ງກ່າວ ໃນການຊຸກຍູ້ການພົວພັນຮ່ວມມື ແລະ ການເປັນຫຸ້ນສ່ວນຂອງສອງພາກພື້ນໃຫ້ນັບມື້ນັບເພີ່ມຂຶ້ນ. ພ້ອມນີ້, ໄດ້ຢືນຢັນວ່າ ສປປ ລາວ ພ້ອມແລ້ວທີ່ຈະຮ່ວມມືກັບບັນດາປະເທດສະມາຊິກຂອບການຮ່ວມມືອາຊີຕາເວັນອອກກາງອື່ນໆ ໃນວຽກງານການຄ້າ, ການລົງທຶນ ແລະ ການທ່ອງທ່ຽວ. ສປປ ລາວ ມີເງື່ອນໄຂທີ່ໄດ້ປຽບທຽບໃນການດຶງດູດການລົງທຶນ ຂອງຕ່າງປະເທດເປັນຕົ້ນ ມີທີ່ຕັ້ງເປັນສູນກາງຂອງອະນຸພາກພື້ນ, ມີຄວາມຫມັ້ນຄົງທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມ, ມີແຫລ່ງບົ່ມຊ້ອນທາງດ້ານຊັບພະຍາກອນທໍາມະຊາດເປັນຕົ້ນແຫລ່ງພະລັງງານໄຟຟ້ານໍ້າຕົກ, ບໍ່ແຮ່, ກະສິກໍາ ປ່າໄມ້ ແລະ ການທ່ອງທ່ຽວ. ນອກຈາກນີ້, ທ່ານ ຍັງໄດ້ແຈ້ງຕໍ່ກອງປະຊຸມວ່າ ໃນອາທິດຜ່ານມາ ສປປ ລາວ ໄດ້ຮັບກຽດເປັນເຈົ້າພາບຈັດກອງປະຊຸມສຸດຍອດອະນຸພາກພື້ນແມ່ນໍ້າຂອງດ້ວຍຜົນສໍາເລັດອັນຈົບງາມ ເຊິ່ງສຸມໃສ່ 9 ຂະແຫນງການບູລິມະສິດ ແລະ ໄດ້ມີການຮັບຮອງເອົາແຜນປະຕິບັດວຽກງານວຽງຈັນໄລຍະ 5 ປີຕໍ່ຫນ້າ (2008 2012) ແລະ ສະເຫນີໃຫ້ບັນດາປະເທດສະມາຊິກຂອບການຮ່ວມມືອາຊີຕາເວັນອອກກາງ ເຂົ້າຮ່ວມໃນຂອບການຮ່ວມມືອະນຸພາກພື້ນດັ່ງກ່າວ ເພື່ອພ້ອມກັນກ້າວຂຶ້ນ ແລະ ມີຜົນປະໂຫຍດຮ່ວມກັນ. ຄຽງຄູ່ກັນນີ້, ທ່ານ ໄດ້ເຊື້ອເຊີນບັນດາປະເທດສະມາຊິກຂອບການຮ່ວມມືອາຊີຕາເວັນອອກກາງ ເຂົ້າຮ່ວມຂອບການຮ່ວມມືອາຊຽນ ແລະ ເຂດການຄ້າເສລີອາຊຽນຕື່ມ ເພື່ອເປັນການປະກອບສ່ວນເຂົ້າໃນການສ້າງສັນຕິພາບ ແລະ ຄວາມຫມັ້ນຄົງລະຫວ່າງສອງພາກພື້ນອີກດ້ວຍ. ທ່ານ ໄດ້ຮຽກຮ້ອງໄປຍັງບັນດາປະເທດສະມາຊິກທັງຫມົດ ຈົ່ງໄດ້ຮ່ວມກັນເດັດດ່ຽວຜັນຂະຫຍາຍຜົນກອງປະຊຸມຄັ້ງນີ້ ໃຫ້ປະກົດຜົນເປັນຈິງ ແລະ ເກີດດອກອອກຜົນຍິ່ງໆຂຶ້ນ.

ໃນກອງປະຊຸມຂອບການຮ່ວມມືອາຊີຕາເວັນອອກກາງຄັ້ງນີ້ ໄດ້ຮັບຮອງເອົາຖະແຫລງການສະບັບປະຫວັດສາດວ່າດ້ວຍຫລັກການແຫ່ງໄມຕີຈິດ ແລະ ການຮ່ວມມື, ເຊິ່ງຈະເປັນພື້ນຖານໃຫ້ແກ່ການຮ່ວມມືດັ່ງກ່າວປະກົດຜົນເປັນຈິງ.

ໃນໂອກາດເຂົ້າຮ່ວມ ກອງປະຊຸມໃນເທື່ອນີ້, ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການຕ່າງປະເທດຍັງໄດ້ພົບປະກັບທ່ານ ຣີອຽດ ເອລ ມາລກີ (Ryad El Malki). ລັດຖະມົນຕີຕ່າງປະເທດລັດປະແລັດສະຕິນ. ສອງຝ່າຍ ໄດ້ແລກປ່ຽນຄໍາຄິດຄໍາເຫັນນໍາກັນກ່ຽວກັບຄວາມຄືບຫນ້າໃນການຕໍ່ສູ້ຂອງປະຊາຊົນປາແລັດສະຕິນ ເພື່ອບັນລຸການສ້າງຕັ້ງລັດປາແລັດສະຕິນເອກະລາດຂອງຕົນທີ່ປາແລັດສະຕິນ.